


**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດຳເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປັດຈຸບັນ ທຄຕລ ມີ 19 ສາຂາ ແລະ ໜ່ວຍບໍລິການຫຼາຍກວ່າ 80 ໜ່ວຍທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນໜຶ່ງ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

## ທຄຕລ ສາຂາ ຫຼວງນ້ຳທາ ຕ້ອງການຮັບພະນັກງານໃໝ່ ເພື່ອປະກອບໃຫ້ສາຂາດັ່ງນີ້:

### ❖ ວິຊາການ IT 01 ຕຳແໜ່ງ

**ເງື່ອນໄຂຜູ້ສະໝັກ:** ເພດ: **ຍິງ ຫຼື ຊາຍ** ມີອາຍຸບໍ່ເກີນ **30** ປີ.

- ✓ ມີໃບປະກາດຈົບຊັ້ນສູງຂຶ້ນໄປ ດ້ານວິທະຍາສາດຄອມພິວເຕີ, ວິສະວະກຳຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ຈາກພາຍໃນ ຫຼື ຕ່າງປະເທດ ມີຄະແນນ **CGPA** ໂດຍສະເລ່ຍ **2.70/4.00** ຫຼື **6.75/10** ຂຶ້ນໄປ.
- ✓ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ ຫຼື ຖ້າຫາກສາມາດເວົ້າພາສາຕ່າງປະເທດອື່ນໆໄດ້ກໍ່ຍິ່ງເປັນການດີ.
- ✓ ມີສຸຂະພາບແຂງແຮງ, ມີມະນຸດສຳພັນດີ, ມີຄວາມອົດທົນ, ຊື່ສັດ ແລະ ສາມາດເຮັດວຽກນອກໂມງການໄດ້.
- ✓ ມີປະສົບການວຽກງານ IT support ຍິ່ງເປັນການດີ.

### ❖ ວິຊາການ Teller ເພື່ອປະກອບໃຫ້ຂະແໜງການພາຍໃນ ແລະ ໜ່ວຍບໍລິການ 07 ຕຳແໜ່ງ:

**ເງື່ອນໄຂຜູ້ສະໝັກ:** ເພດ: **ຊາຍ ຫຼື ຍິງ** ແລະ ມີອາຍຸບໍ່ເກີນ **30** ປີ.

- ✓ ມີໃບປະກາດຈົບຊັ້ນສູງຂຶ້ນໄປໃນສາຂາການເງິນ, ການທະນາຄານ, ບັນຊີ, ການຕະຫຼາດ, ການຄ້າ, ເສດຖະສາດ ແລະ ບໍລິຫານທຸລະກິດທີ່ມີຄະແນນ **CGPA** ໂດຍສະເລ່ຍ **2.70/4.00 ຫຼື 6.75/10** ຂຶ້ນໄປ.
- ✓ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ.
- ✓ ຖ້າຫາກສາມາດເວົ້າພາສາຈີນ, ຫວຽດນາມ, ຝຣັ່ງໄດ້ຍິ່ງເປັນການດີ.
- ✓ ມີຄວາມຮູ້ພື້ນຖານການນຳໃຊ້ຄອມພິວເຕີ.

**ຄຸນລັກສະນະຜູ້ສະໝັກ:**

- ✓ **ຕ້ອງເປັນຄົນທ້ອງຖິ່ນແຂວງຫຼວງນ້ຳທາ ຫຼື ມີທີ່ຢູ່ອາໃສຖາວອນຢູ່ແຂວງຫຼວງນ້ຳທາ (ສຳລັບຜູ້ທີ່ໄດ້ສະໝັກງານຢູ່ ທຄຕລ ສາຂາບໍ່ແກ້ວນັ້ນ ກໍ່ສາມາດມາສະໝັກໄດ້).**
- ✓ ຊື່ສັດບໍລິສຸດ, ມະນຸດສຳພັນດີ.
- ✓ ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ.
- ✓ ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ.
- ✓ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ.
- ✓ ມີໃຈຮັກໃນວຽກງານບໍລິການ.
- ✓ ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.

**ວິທີສະໝັກວຽກ:**

1) ຜູ້ທີ່ສົນໃຈສາມາດດາວໂລດເອົາແບບຟອມສະໝັກວຽກໄດ້ທີ່ www.bcel.com.la ເຂົ້າໄປທີ່ສະໝັກງານ>ດາວໂຫຼດຟອມສະໝັກວຽກສຳລັບສາຂາ.
2) ຕື່ມຂໍ້ມູນຟອມສະໝັກທີ່ດາວໂຫຼດ ແລະ ປະກອບເອກະສານໃຫ້ຄົບຖ້ວນດັ່ງນີ້:

- ✓ ຊີວະປະຫວັດເປັນເພົ່າ 4 ໜ້າ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ຮູບຖ່າຍ 3x4 ຈຳນວນ 04 ໃບ (ບໍ່ເກີນ 3 ເດືອນ).
- ✓ ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວ.
- ✓ ສຳເນົາໃບປະກາດວິຊາສະເພາະ ແລະ ໃບຄະແນນ.
- ✓ ຄ່າທຳນຽມໃນການສະໝັກຈຳນວນ 10.000 ກີບ.
- ✓ ສຳເນົາໃບປະກາດ ມໍ ປາຍ.
- ✓ ໃບກວດສຸຂະພາບ (ກາແດງ ແລະ ບໍ່ເກີນ 6 ເດືອນ).
- ✓ ໃບຢັ້ງຢືນຄ້ຳປະກັນ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ໃບແຈ້ງໂທດ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ໃບຢັ້ງຢືນທີ່ຢູ່ (ກາແດງ ແລະ ບໍ່ເກີນ 3 ເດືອນ).

3) ພົວພັນຮັບ-ສົ່ງເອກະສານດ້ວຍຕົນເອງໄດ້ທີ່ **ຂະແໜງຫ້ອງການ-ບັນຊີ-ໄອທີ ຂອງ** ທຄຕລ ສາຂາຫຼວງນ້ຳທາ ສອບຖາມຂໍ້ມູນໂທ: **086 211 316.**
4) ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.
5) ໃນການສົ່ງຟອມສະໝັກວຽກຕ້ອງຖືໃບປະກາດວິຊາສະເພາະ ແລະ ໃບຄະແນນ ສະບັບຂອງແທ້ມາຢັ້ງຢືນນຳ.
6) ***ກຳນົດເລີ່ມແຈກ-ຮັບ ເອກະສານສະໝັກຕັ້ງແຕ່ ວັນທີ 23/04/2018-11/05/2018.***

ຫຼວງນ້ຳທາ, ວັນທີ 19/04/2018

ຫົວໜ້າທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາຂາຫຼວງນ້ຳທາ

ແຂວງ ສປປ ລາວ ສາຂາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຫຼວງນ້ຳທາ

ນ. ສຸດາຖະໜອມ ແກ້ວລະຄອນ